ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດທົ່ວປະເທດ ປີ 2017




ກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບໂຄງການສະຫະພັນສະຫະກອນ ໄຣ ໄຟເຊັນ ແຫ່ງ ສສ ເຢຍລະມັນ ປະຈຳ ສປປ ລາວ (DGRV) ໄດ້ຈັດຕັ້ງກອງປະຊຸມວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ທົ່ວປະເທດ ປະຈຳປີ 2017 ຂຶ້ນໃນລະຫວ່າງ ວັນທີ 20 ຫາ 22 ກຸມພາ ທີ່ແຂວງຈຳປາສັກ ໂດຍການ ໃຫ້ກຽດເຂົ້າຮ່ວມຂອງ ທ່ານ ບົວສອນ ວົງສອງຄອນ ຮອງເຈົ້າແຂວງ-ແຂວງຈຳປາສັກ, ພ້ອມນີ້ ກໍມີບັນດາຜູ້ຕາງໜ້າຈາກກະ ຊວງຈຳນວນໜຶ່ງ, ຄະນະກົມ-ຄະນະສາຂາ ທຫລ ປະຈຳພາກ, ຄະນະປະທານສະພາບໍລິຫານ-ຜູ້ຈັດການ ສສງ ເຂົ້າຮ່ວມຢ່າງ ຄົບຖ້ວນ.

ໃນມື້ທຳອິດຂອງກອງປະຊຸມ, ຄະນະຜູ້ແທນ ໄດ້ໄປຢ້ຽມຢາມ ແລະ ແລກປ່ຽນບົດຮຽນຢູ່ ສສງ ຈຳປາພັດທະນາ, ສສງ ໜອງໄຮໂຄກ, ສສງ ພັດທະນາແກ້ວສຳພັນ ແລະ ສສງ ຫົວແຊຈະເລີນ; ໃນມື້ຕໍ່ມາ ທ່ານ ພັນທະບູນ ໄຊຍະເພັດ ຮອງ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນໄດ້ສະຫຼຸບການຄຸ້ມຄອງ, ສົ່ງເສີມວຽກງານ ສສງ ໃນປີ 2017 ຜ່ານມາ ເຫັນວ່າມີ ຄວາມຄືບໜ້າໃນຫຼາຍດ້ານພໍສົມຄວນ ເປັນຕົ້ນ: ການສ້າງຄວາມເຂັ້ມແຂງທາງດ້ານວິຊາສະເພາະ ແລະ ບັນດາ ສສງ ໄດ້ມີການ ປັບຕົວໃນທ່ວງທ່າທີ່ດີຂຶ້ນເປັນກ້າວໆ ອັນເນື່ອງມາຈາກການປະຕິບັດບົດບາດໜ້າທີ່ ກໍຄືຜົນຈາກການຮ່ວມມືຂອງບັນດາພາກສ່ວນທ້ອງຖິ່ນຕ່າງໆ ນັບແຕ່ຂັ້ນວາງແນວທາງນະໂຍບາຍ, ພາກສ່ວນຄຸ້ມຄອງ ແລະ ຂອດປະສານງານໄດ້ມີການປັບປຸງຢ່າງເປັນ

ລະບົບເຮັດໃຫ້ການເຄື່ອນໄຫວໂດຍລວມ ມີຄວາມຮັດກຸມ ແລະ ສະດວກຫຼາຍຂຶ້ນ; ທຫລ ເລັ່ງໃສ່ສ້າງຄວາມເຂັ້ມແຂງໃນການສົ່ງເສີມ ແລະ ຄຸ້ມຄອງເພື່ອເປັນໃຈກາງປົ່ນອ້ອມຂະແໜງການອື່ນໆ ທີ່ກ່ຽວຂ້ອງດ້ວຍຫຼາຍຮູບການ ແລະຮ່ວມກັບຫຼາຍພາກສ່ວນ ລວມທັງອຳນາດການປົກຄອງທ້ອງຖິ່ນທັງພາຍໃນ ແລະສາກົນ ໂດຍໄດ້ດຶງດູດເອົາການຮ່ວມມືຈາກສາກົນໃນຮູບແບບ ໂຄງການຊ່ວຍເຫຼືອເພື່ອຫັນເອົາທຶນຮອນ ແລະ ເຕັກນິກວິຊາສະເພາະເຂົ້າສູ່ແຜນການ, ແຜນງານ ແລະ ການຈັດຕັ້ງປະຕິບັດຕົວຈິງ ກາຍເປັນກຳລັງສຳຄັນໃນການປະກອບສ່ວນຊຸກຍູ້ສົ່ງເສີມຢ່າງແຂງແຮງເຂົ້າໃນການສະໜອງແຫຼ່ງທຶນໃຫ້ແກ່ສະມາຊິກຜູ້ທຸກຍາກ ແລະ ຜູ້ທີ່ມີລາຍໄດ້ຕໍ່າໃຫ້ດີຂຶ້ນ.





ຈາກນັ້ນປະຊຸມ ກໍໄດ້ຮັບຟັງລາຍງານສະພາບການຄຸ້ມຄອງ ແລະພ້ອມນຳສະເໜີທິດທາງໃນການແກ້ໄຂບັນຫາຂໍ້ຄົງຄ້າງຂອງ ສສງ ທີ່ ແຂວງຈຳປາສັກ; ຮັບຟັງການລາຍງານຜົນການເຄື່ອນໄຫວຂອງ DGRV; ນຳສະເໜີການພັດທະນາ ໂປຼ ແກຣມບັນຊີ ສຳລັບສະຖາບັນການເງິນ; ຕາງໜ້າ ສສງ ຫຼວງພະບາງສະເໜີໃນຫົວຂໍ້: ການບັນ ຊີ ແລະການລາຍງານ; ສສງ ຄອນຈັນສະເໜີ: ການຂະຫຍາຍສິນເຊື່ອ ແລະການບໍລິຫານໜີ້ຊັກຊ້າ; ສສງ ຫີນເຫີບ ນຳສະເໜີ: “ການຂະຫຍາຍສິນເຊື່ອ ແລະການບໍລິຫານໜີ້ຊັກຊ້າ; ສສງ ເຊໂນ ນຳສະເໜີ: “ການຂະຫຍາຍສະມາຊິກ ແລະການລະດົມຮຸ້ນ”; ສສງ ມິດຕະພາບ ນຳສະເໜີ: “ການກວດກາ ພາຍໃນ” ແລະສສງ ຫົວແຊຈະເລີນນຳສະເໜີໃນຫົວຂໍ້: “ການບໍລິຫານ ແລະການຄວບຄຸມພາຍ ໃນ”.

ໃນໂອກາດດັ່ງກ່າວ, ທ່ານ ບົວສອນ ວົງສອງຄອນ ຮອງເຈົ້າແຂວງ-ແຂວງຈຳປາສັກ ກໍໄດ້ໃຫ້ກຽດມອບໃບຍ້ອງຍໍແກ່ ສສງ ດີເດັ່ນ ແລະ ມອບໃບກຽດຕິຄຸນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງ ແລະເວລາຕໍ່ມາທ່ານຮອງເຈົ້າແຂວງ-ແຂວງ ຈຳປາສັກ ກໍໄດ້ໂອ້ລົມຕໍ່ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ.

ໃນມື້ສຸດທ້າຍຂອງກອງປະຊຸມໂດຍພາຍໃຕ້ການເປັນປະທານຂອງທ່ານ ພົນທະບູນ ໄຊຍະເພັດ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ກໍໄດ້ມີການນຳສະເໜີຈາກຫຼາຍພາກສ່ວນ ໂດຍສະເພາະການນຳສະເໜີສະພາບການເຄື່ອນໄຫວວຽກ ງານສະຫະກອນສິນເຊື່ອຂອງສາກົນ, ບັນດາປະເທດໃນພາກພື້ນ ລວມທັງອາຊຽນ; ພ້ອມນີ້ ຍັງໄດ້ນຳສະເໜີ ແລະແລກປ່ຽນ ບົດຮຽນຂອງສະຫະກອນສິນເຊື່ອ ສູນກາງເທວາ; ນຳສະເໜີ ແລະ ແລກປ່ຽນບົດຮຽນໃນການສ້າງ ຄວາມເຂັ້ມແຂງໃຫ້ແກ່ ສສງ ແລະສ້າງເຄືອຂ່າຍໃນອາຊີ ແລະການກະກຽມສ້າງຕັ້ງສະມາຄົມ ສສງ ແລະບົດບາດໜ້າທີ່ຂອງສະມາຄົມ.

ໃນໄລຍະຜ່ານມາ ບັນດາສສງ ໃນ ສປປ ລາວ ສາມາດສ້າງໄດ້ບັນຫາພົ້ນເດັ່ນໃນການປະກອບແຫຼ່ງທຶນເຂົ້າໃນການ ພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ

ບັນດາເຜົ່າດີຂຶ້ນເປັນລຳດັບ ລວມທັງເມືອງ ເປົ້າໝາຍ, ຈຸດສຸມຂອງລັດຖະບານ-ຈຸດສຸມຂອງທ້ອງຖິ່ນ ແລະ ບ້ານ 3 ສ້າງ.




ຂະແໜງການເງິນເປັນຂະແໜງການທີ່ສຳຄັນໃນການປະກອບສ່ວນຊຸກຍູ້ໃຫ້ແກ່ການຂະຫຍາຍຕົວ ທາງດ້ານເສດຖະ ກິດ ລວມທັງມີການປະກອບສ່ວນໃນການແກ້ໄຂຄວາມທຸກຍາກຢູ່ບັນດາເມືອງຕິດພັນກັບ ວຽກງານ 3 ສ້າງ ແລະຊ່ວຍສົ່ງເສີມຄວາມອາດສາມາດໃນການສູ້ຊົນເພື່ອຮັບປະກັນເປົ້າໝາຍສະຫັດສະວັດ ດ້ານການພັດທະນາທີ່ຍັງບໍ່ສຳເລັດ ໂດຍໄດ້ເຊື່ອມໂຍງ ເຂົ້າໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາ ແບບຍືນຍົງໃນການນຳເອົາປະເທດຊາດຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາໃຫ້ໄດ້ໃນປີ 2020. ໃນນັ້ນ, ສສງ ເປັນພາກສ່ວນໜຶ່ງຂອງຂະແໜງການເງິນທີ່ພັກ ແລະລັດຖະບານ ໄດ້ມີ ການວາງ ນະໂຍບາຍສະເພາະ ແນໃສ່ສ້າງເງື່ອນໄຂທີ່ເອື້ອອຳນວຍໃນດ້ານຕ່າງໆ ເພື່ອສົ່ງເສີມ ສສງ ໃຫ້ມີການ ຂະຫຍາຍຕົວ ຢ່າງເຂັ້ມແຂງຢູ່ແຕ່ລະເມືອງ ປະກອບສ່ວນສະໜອງທຶນຮອນໃຫ້ແກ່ສະມາຊິກກໍ່ຄືປະຊາຊົນ ໃນການແກ້ໄຂຄວາມທຸກຍາກ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ